# ຖແລງການ

## ແລະອະນຸສັນຍາ

## ກ່ຽວກັບຄວາມເປັນກາງຂອງລາວ

ຖແລງການວ່າດ້ວຍຄວາມເປັນກາງຂອງລາວ

ບັນດາຣັຖບານການາດາ, ຣາຊອານາຈັກກັມພູຊາ, ສາທາຣະນະຣັດປະຊາຊົນຈີນ, ສະຫະພາບສາທາຣະນະຣັດສັງຄົມນິຍົມໂຊວຽດ ຣາຊອານາຈັກໄທ, ສະຫະຣາຊອານາຈັກບຣິເຕນໃຫຍ່ແລະອຽກລັງພາກເໜືອ, ສາທາຣະນະຣັດປະຊາຊົນໂປໂລຍ, ສາທາຣະນະຣັດຝຣັ່ງເສດ, ສະຫະພາບພະມ້າ, ສາທາຣະນະຣັດປະຊາທິປະໄຕວຽດນາມ, ສາທາຣະນະຣັດວຽດນາມ, ສະຫະຣັດອະເມຣິກາ, ສາທາຣະນະຣັດອິນເດັຽ ຊຶ່ງມີຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມລະຫວ່າງຊາດ ປີ ໑໙໖໑-໑໙໖໒ ເພື່ອແກ້ໄຂບັນຫາລາວ.

ຊົມເຊີຍຕ້ອນຮັບການສເນີຖແລງການວ່າດ້ວຍຄວາມເປັນກາງຂອງຣັຖບານລາວ ວັນທີ ໙ ກໍຣະກະດາ ໑໙໖໒ ແລະຈົດຈຳຮັບຮູ້ຖແລງການນັ້ນ. ຕາມຄວາມເຫັນພ້ອມຂອງຣັຖບານລາວ ຖແລງການນັ້ນໄດ້ຖືກຈົດເຂົ້າເປັນຕົວບົດອັນດຽວກັນກັບຖແລງການສະບັບນີ້. ຖແລງການດັ່ງກ່າວມີເນື້ອຄວາມດັ່ງຕໍ່ໄປນີ້:

ຣັຖບານຣາຊອານາຈັກລາວ

ຕັ້ງໃຈເດີນຕາມເສັ້ນທາງສັນຕິພາບ ແລະເປັນກາງຢ່າງຖືກຕ້ອງກັບຜົນປໂຍດແລະຄວາມມຸ້ງມາດປາຖນາຂອງປະຊາຊົນລາວ ແລະຖືກຕ້ອງກັບບັນດາຫຼັກການຂອງຖແລງການຮ່ວມຊູຣິກ ສະບັບວັນທີ ໒໒ ມິຖຸນາ ໑໙໖໒ ແລະຂອງສັນຍາເຊີແນວ ປີ ໑໙໕໔ ເພື່ອສ້າງພຣະຣາຊອານາຈັກລາວໃຫ້ເປັນປະເທດສັນຕິພາບເປັນກາງ, ເອກະຣາດ, ປະຊາທິປະໄຕ, ເອກະພາບ ແລະວັທນາຖາວອນ.

ຖແລງການຢ່າງສງ່າຜ່າເຜີຍວ່າ :

໑/- ຈະຕັ້ງໃຈປະຕິບັດຫຼັກການ ໕ ປະການ ຮ່ວມກັນຢູ່ໂດຍ
ສັນຕິໃນການສັມພັນດ້ານຕ່າງປະເທດ, ຈະແຜ່ຂຍາຍສາຍສັມພັນຖານມິດ
ແລະຈະຜູກສາຍສັມພັນທາງການທູດກັບທຸກໆປະເທດ, ເປັນຕົ້ນກັບບັນດາ
ປະເທດເພື່ອນບ້ານໃກ້ຄຽງ, ບົນພື້ນຖານແຫ່ງຄວາມສເມີພາບແລະຄວາມ
ເຄົາຣົບເອກະຣາດແລະອຳນາດອະທິປະໄຕຂອງພຣະຣາຊອານາຈັກລາວ.

໒/- ຄວາມປະສົງຂອງປະຊາຊົນລາວແມ່ນຈະປ້ອງກັນແລະເຮັດ
ໃຫ້ມີການເຄົາຣົບອຳນາດອະທິປະໄຕ, ເອກະຣາດ, ຄວາມເປັນກາງ,
ເອກະພາບ ແລະພື້ນແຜ່ນດິນອັນຄົບຖ້ວນຂອງພຣະຣາຊອານາຈັກລາວ.

໓/- ຈະບໍ່ໃຊ້ແລະບໍ່ນາບຂູ່ວ່າ ຈະໃຊ້ກຳລັງອັນຈະພາໃຫ້ເປັນ
ການເສື່ອມເສັຽເຖິງສັນຕິພາບຂອງບັນດາປະເທດອື່ນ ແລະບໍ່ແຊກແຊງ
ເຂົ້າໃນວຽກການພາຍໃນຂອງບັນດາປະເທດອື່ນ.

໔/- ຈະບໍ່ເຂົ້າຮ່ວມໃນສັມພັນທະຫານໃດໆ ຫຼືໃນຂໍ້ຕົກລົງໃດໆ
ທີ່ມີລັກສນະການທະຫານຫຼືອື່ນໆ ຊຶ່ງບໍ່ເໝາະສົມກັບຄວາມເປັນກາງຂອງ
ພຣະຣາຊອານາຈັກລາວ ຈະບໍ່ອະນຸຍາດໃຫ້ຕ່າງປະເທດໃດໆມາຕັ້ງຖານ
ທັບໃສ່ໃນດິນລາວ, ຈະບໍ່ອະນຸຍາດໃຫ້ປະເທດໃດໆມາໃຊ້ແຜ່ນດິນລາວ
ເພື່ອຈຸດປະສົງທາງດ້ານທະຫານ ຫຼືຈຸດປະສົງຈະແຊກແຊງເຂົ້າໃນວຽກ
ການພາຍໃນຂອງປະເທດອື່ນ ແລະຈະບໍ່ຮັບຮູ້ຄວາມອາຣັກຂາຂອງສັມ
ພັນທະຫານ ຫຼືກຸ່ມທະຫານໃດໆ ໂຮມທັງກຸ່ມຊີອາໂຕ້ດ້ວຍ.

໕/- ຈະບໍ່ອະນຸຍາດໃຫ້ຕ່າງປະເທດໃດໆ ແຊກແຊງເຂົ້າມາ
ໃນວຽກການພາຍໃນຂອງພຣະຣາຊອານາຈັກລາວ ແມ່ນຈະມາໃນຮູບໃດ

ກໍຕາມ.

ຜ/- ນອກຈາກບັນຍັດພິເສດທີ່ເວົ້າຢູ່ໃນມາຕຣາ ໕ ຂອງອະນຸສັນຍານັ້ນແລ້ວ ຈະຫວງໃຫ້ຖອນທຸກກອງທະຫານ ແລະທຸກພະນັກງານທະຫານຕ່າງປະເທດອອກຈາກພຣະຣາຊອານາຈັກລາວ ແລະຈະບໍ່ອະນຸຍາດໃຫ້ນຳເອົາກອງທະຫານຕ່າງປະເທດໃດໆ ຫຼືພະນັກງານທະຫານຕ່າງປະເທດໃດໆເຂົ້າມາໃນພຣະຣາຊອານາຈັກລາວ.

ກ/- ຈະຮັບເອົາການຊ່ວຍເຫຼືອໂດຍກົງແລະບໍ່ມີເງື່ອນໄຂຂອງທຸກໆປະເທດທີ່ຢາກຈະຊ່ວຍເຫຼືອພຣະຣາຊອານາຈັກລາວໃຫ້ສ້າງເສດຖະກິດຂອງຊາດອັນເປັນເອກະຣາດ ແລະເປັນເຂົ້າຂອງຕົນເອງ ບົນພື້ນຖານແຫ່ງຄວາມເຄົາຣົບອຳນາດອະທິປະໄຕຂອງພຣະຣາຊອານາຈັກລາວ.

ຍ/- ຈະເຄົາຣົບບັນດາຂໍ້ສັນຍາແລະຂໍ້ຕົກລົງທີ່ໄດ້ເຊັນຊື່ແລ້ວ ແລະທີ່ເປັນການຖືກຕ້ອງກັບຜົນປໂຍດຂອງປະຊາຊົນລາວ ແລະຖືກຕ້ອງກັບນະໂຍບາຍສັນຕິພາບເປັນກາງຂອງພຣະຣາຊອານາຈັກລາວ ເປັນຕົ້ນບັນດາຂໍ້ສັນຍາເຊີແນວ ປີ ໑໙໕໔ ແລະຈະລົບລ້າງບັນດາຂໍ້ສັນຍາແລະຂໍ້ຕົກລົງທີ່ຜິດກັບບັນດາຫຼັກການດັ່ງກ່າວນັ້ນ.

ຖແລງການຂອງຣັຖບານຣາຊອານາຈັກລາວ ວ່າດ້ວຍຄວາມເປັນກາງນີ້ ຈະນຳອອກປະກາດໃຊ້ຢ່າງຖືກຕ້ອງຕາມກົດໝາຍຣັຖທັມະນູນ ແລະຈະຖືວ່າໃຊ້ໄດ້ເປັນກົດໝາຍສະບັບນຶ່ງ.

ພຣະຣາຊອານາຈັກລາວຮຽກຮ້ອງທຸກໆປະເທດທີ່ເຂົ້າຮ່ວມໃນກອງປະຊຸມລະຫວ່າງຊາດ ເພື່ອແກ້ໄຂບັນຫາລາວ ແລະທຸກປະເທດອື່ນໆໃຫ້ຮັບຮູ້ອຳນາດອະທິປະໄຕ,ເອກະຣາດ,ຄວາມເປັນກາງ,ເອກະ

ພາບ ແລະພື້ນແຜ່ນດິນອັນຄົບຖ້ວນ ຂອງພຣະຣາຊອານາຈັກລາວ ໃຫ້ປະຕິບັດຕາມຢ່າງຖືກຕ້ອງທຸກປະການ ແລະໃຫ້ຫຼີກເວັ້ນທຸກການກະທຳອັນເປັນການບໍ່ເໝາະສົມກັບບັນດາຫຼັກການດັ່ງກ່າວນັ້ນ.

ພ້ອມກັນຢືນຢັນຫຼັກການເຄົາຣົບອຳນາດອະທິປະໄຕ, ເອກະຣາດ, ເອກະພາບ ແລະພື້ນແຜ່ນດິນອັນຄົບຖ້ວນຂອງພຣະຣາຊອານາຈັກລາວ ພ້ອມທັງການບໍ່ແຊກແຊງເຂົ້າວຽກການພາຍໃນທີ່ບົ່ງໄວ້ໃນສັນຍາເຈີແນວ ປີ ໑໙໕໔.

ພ້ອມກັນເນັ້ນຫຼັກການເຄົາຣົບຄວາມເປັນກາງຂອງພຣະຣາຊອານາຈັກລາວ. ພ້ອມກັນເຫັນດີວ່າບັນດາຫຼັກການດັ່ງກ່າວຂ້າງບົນນີ້ເປັນພື້ນຖານໃຫ້ແກ່ການແກ້ໄຂບັນຫາລາວໂດຍສັນຕິວິທີ. ພ້ອມກັນເຊື່ອຢ່າງເລິກເຊິ່ງວ່າເອກະຣາດ ແລະຄວາມເປັນກາງຂອງພຣະຣາຊອານາຈັກລາວຈະປະກອບສ່ວນເຂົ້າໃນການຂຍາຍຕົວຢ່າງສັນຕິ ແລະເປັນປະຊາທິປະໄຕຂອງພຣະຣາຊອານາຈັກລາວ ແລະໃນການເຮັດໃຫ້ບັນລຸເຖິງຄວາມປອງດອງຊາດ ແລະເອກະພາບຂອງພຣະຣາຊອານາຈັກນີ້ ພ້ອມທັງການປັບປຸງສັນຕິພາບແລະຄວາມປອດໄພຂອງພາກອາຊີ ອາຄະເນໃຫ້ເຂັ້ມແຂງຂຶ້ນ.

໑/- ພ້ອມກັນຖແລງຢ່າງສງ່າຜ່າເຜີຍ ແລະຢ່າງຖືກຕ້ອງຕາມຄວາມມັກຂອງຣັຖບານແລະປະຊາຊົນແຫ່ງພຣະຣາຊອານາຈັກລາວ ຕາມທີ່ໄດ້ກ່າວຢູ່ໃນຖແລງການວ່າດ້ວຍຄວາມເປັນກາງຂອງລາວທີ່ຣັຖບານຣາຊອານາຈັກລາວໄດ້ປະກາດເມື່ອວັນທີ ໙/໗/໖໒ ວ່າເຂົາເຈົ້າຮັບຮູ້ ແລະຮັບເຄົາຣົບອຳນາດອະທິປະໄຕເອກະຣາດ, ຄວາມເປັນກາງ

ເອກະພາບ ແລະພື້ນແຜ່ນດິນອັນຄົບຖ້ວນຂອງພຣະຣາຊອານາຈັກລາວ ແລະຮັບຈະປະຕິບັດໃຫ້ຖືກຕ້ອງຕາມທຸກຂໍ້ຄວາມ.

໔/- ພ້ອມກັນໃຫ້ຄຳໝັ້ນສັນຍາໂດຍສະເພາະດັ່ງຕໍ່ໄປນີ້:-

ກ. ເຂົາເຈົ້າຈະບໍ່ກະທຳສິ່ງໃດໆ ໂດຍວິທີໃດໆ ຈະເປັນໂດຍທາງກົງຫຼືທາງອ້ອມກໍຕາມ ອັນເປັນການລະເມີດອຳນາດອະທິປະໄຕ, ເອກະຣາດ, ຄວາມເປັນກາງ, ເອກະພາບ ຫຼືພື້ນແຜ່ນດິນອັນຄົບຖ້ວນຂອງພຣະຣາຊອານາຈັກລາວ ຫຼືຈະບໍ່ເຂົ້າຮ່ວມໂດຍວິທີໃດໆ ໃນການກະທຳອັນມີລັກສນະດັ່ງກ່າວນັ້ນ.

ຂ. ເຂົາເຈົ້າຈະບໍ່ໃຊ້ ຫຼື ບໍ່ນາບຂູ່ວ່າຈະໃຊ້ກຳລັງຫຼືວິທີການອື່ນໃດທີ່ອາດຈະລະເມີດສັນຕິພາບໃນພຣະຣາຊອານາຈັກລາວ.

ຄ. ເຂົາເຈົ້າຈະຫຼີກເວັ້ນ ບໍ່ກະທຳການແຊກແຊງ, ຈະເປັນໂດຍທາງກົງຫຼືທາງອ້ອມກໍຕາມ ເຂົ້າໃນວຽກການພາຍໃນຂອງພຣະຣາຊອານາຈັກລາວ.

ງ. ເຂົາເຈົ້າຈະບໍ່ເອົາເງື່ອນໄຂດ້ານການເມືອງໃດໆ ມາຜູກມັດໃສ່ການຊ່ວຍເຫຼືອທີ່ເຂົາເຈົ້າອາດຈະໃຫ້ແກ່ພຣະຣາຊອານາຈັກລາວ ຫຼືທີ່ພຣະຣາຊອານາຈັກລາວຈະຮ້ອງຂໍ.

ຈ. ເຂົາເຈົ້າຈະບໍ່ແກ່ດຶງພຣະຣາຊອານາຈັກລາວດ້ວຍວິທີໃດໆ ໃຫ້ເຂົ້າໄປຮ່ວມນຳກຸ່ມສັມພັນທະທານໃດໆ ຫຼືສັນຍາອື່ນໆໃດ ທີ່ມີລັກສນະທະຫານຫຼືອື່ນໆ ທີ່ບໍ່ເພາະສົມກັບຄວາມເປັນກາງຂອງລາວ ແລະຈະບໍ່ເຊີນແລະບໍ່ສົ່ງເສີມພຣະຣາຊອານາຈັກລາວໃຫ້ໄປເປັນພາຄີຂອງກຸ່ມສັມພັນທະທານໃດໆ ຫຼືໄປຕົກລົງເຊັນສັນຍາໃດໆໃນທຳນອງນັ້ນ.

ສ. ເຂົາເຈົ້າຈະເຄົາຣົບນັບຖືຄວາມປະສົງຂອງພຣະຣາຊອານາຈັກລາວ ທີ່ບໍ່ຮັບຮູ້ຄວາມອາຣັກຂາຂອງສັມພັນທະຫານໃດໆ ຫຼືກຸ່ມທະຫານໃດໆ ໂຮມທັງກຸ່ມຊີອາໂຕ້ດ້ວຍ.

ຊ. ເຂົາເຈົ້າຈະບໍ່ນຳເອົາກອງທະຫານ ຫຼືພະນັກງານທະຫານຕ່າງປະເທດໃດໆ ເຂົ້າມາໃນພຣະຣາຊອານາຈັກລາວ ບໍ່ວ່າຈະມາໃນຮູບໃດ ແລະຈະບໍ່ໃຫ້ຄວາມສະດວກໃດໆ ແກ່ການນຳເອົາທະຫານຫຼືພະນັກງານທະຫານຕ່າງປະເທດ, ບໍ່ໃຫ້ຄວາມຊ່ວຍເຫຼືອຮ່ວມມືຢ່າງໃດແກ່ການນຳເອົາກອງທະຫານຫຼືພະນັກງານທະຫານເຂົ້າມາໃນພຣະຣາຊອານາຈັກລາວດັ່ງກ່າວນັ້ນ.

ຍ. ເຂົາເຈົ້າຈະບໍ່ສ້າງຖານທັບຕ່າງປະເທດໃດໆ ຈຸດທີ່ຕັ້ງຕ່າງປະເທດຫຼືຈຸດທີ່ຕັ້ງກອງທະຫານຕ່າງປະເທດໃດໆ ໃສ່ໃນພຣະຣາຊອານາຈັກລາວ ບໍ່ວ່າຈະເປັນຮູບໃດໆກໍ່ຕາມແລະຈະປະກອບສ່ວນເຂົ້າ ຫຼືບໍ່ຊ່ວຍເຫຼືອຮ່ວມມືດ້ວຍວິທີໃດໆ ເຂົ້າໃນການກໍ່ສ້າງດັ່ງກ່າວນັ້ນ.

ດ. ເຂົາເຈົ້າຈະບໍ່ໃຊ້ແຜ່ນດິນພຣະຣາຊອານາຈັກລາວສຳລັບເຮັດການແຊກແຊງເຂົ້າໃນວຽກການພາຍໃນຂອງປະເທດອື່ນ.

ຕ. ເຂົາເຈົ້າຈະບໍ່ໃຊ້ແຜ່ນດິນປະເທດອື່ນໃດ ໂຮມທັງແຜ່ນດິນຂອງເຂົາເຈົ້າເອງສຳລັບເຮັດການແຊກແຊງເຂົ້າໃນວຽກການພາຍໃນຂອງພຣະຣາຊອານາຈັກລາວ.

ຖ/- ເຂົາເຈົ້າຂໍເຊີນໃຫ້ທຸກປະເທດຮັບຮູ້ແລະເຄົາຣົບອຳນາດອະທິປະໄຕ, ເອກະຣາດ ແລະຄວາມເປັນກາງພ້ອມທັງເອກະພາບ ແລະຜືນແຜ່ນດິນອັນຄົບຖ້ວນຂອງພຣະຣາຊອານາຈັກລາວ ແລະປະຕິບັດ

ໃຫ້ຖືກຕ້ອງຕາມທຸກຂໍ້ຄວາມແລະຫຼີກເວັ້ນທຸກການກະທຳທີ່ບໍ່ເໝາະສົມກັບຫຼັກການເຫຼົ່ານັ້ນ ຫຼືບໍ່ເໝາະສົມກັບຂໍ້ບັນຍັດອື່ນໆ ຂອງຖແລງການສະບັບນີ້.

໔/- ເຂົາເຈົ້າໃຫ້ຄຳໝັ້ນສັນຍາວ່າ ໃນກໍຣະນີທີ່ມີການລະເມີດ ຫຼືມີການນາບຂູ່ວ່າຈະລະເມີດອຳນາດອະທິປະໄຕ, ເອກະຣາດ, ຄວາມເປັນກາງ, ເອກະພາບ ຫຼືພື້ນແຜ່ນດິນອັນຄົບຖ້ວນຂອງພຣະຣາຊອານາຈັກລາວນັ້ນ ຈະພ້ອມກັບຣັຖບານພຣະຣາຊອານາຈັກລາວ ແລະພ້ອມກັນກັບບັນດາປະເທດພາຄີທັງຫຼາຍຈັດການປຶກສາຫາລືເພື່ອພິຈາຣະນາວິທີການທີ່ປາກົດເຫັນວ່າຈຳເປັນເພື່ອຮັບປະກັນການປະຕິບັດຕາມບັນດາຫຼັກການແລະບັນດາຂໍ້ບັນຍັດຂອງຖແລງການສະບັບນີ້.

໕/- ຖແລງການສະບັບນີ້ ຈະປະກາດໃຊ້ນັບແຕ່ມື້ລົງລາຍເຊັນ ແລະຈະຖືກຖືວ່າເປັນສັນຍາລະຫວ່າງຊາດຄົງຄູ່ກັນກັບຖແລງການວ່າດ້ວຍຄວາມເປັນກາງຂອງລາວທີ່ຣັຖບານພຣະຣາຊອານາຈັກລາວໄດ້ປະກາດມື້ວັນທີ ໙/໗/໖໒. ຖແລງການສະບັບນີ້ຈະເອົາບັນຈຸໄວ້ໃນຫໍສມຸດຂອງຣັຖບານສະຫະຣາຊອານາຈັກອັງກິດ ແລະສະຫະພາບສາທາຣະນະຣັດສັງຄົມນິຍົມໂຊວຽດ ທີ່ຈະເປັນຜູ້ສຳເນົາຢັ້ງຢືນຖືກຕ້ອງອອກສົ່ງໃຫ້ປະເທດຄູ່ສັນຍາອື່ນ ແລະທຸກປະເທດໃນໂລກ.

ເພື່ອເປັນຫຼັກຖານ, ພວກຜູ້ຕາງໜ້າທີ່ມີອຳນາດເຕັມ ທີ່ມີຊື່ຢູ່ນີ້ໄດ້ລົງລາຍເຊັນໃສ່ໃນຖແລງການສະບັບນີ້.

ເຮັດເປັນສອງສະບັບທີ່ນະຄອນເຊີແນວ, ວັນທີ ໒໓ ກໍຣະກະດາ ໑໙໖໒ ເປັນພາສາຝຣັ່ງເສດ, ອັງກິດ, ຈີນ, ລາວ, ແລະໂຊວຽດ ທຸກສະບັບຖືເປັນຫຼັກຖານໄດ້ຄືດັ່ງດຽວກັນ.

ບັນດາຣັຖບານການາດາ, ຣາຊອານາຈັກກັມພູຊາ, ສາທາຣະນະປະຊາຊົນຈີນ, ສະຫະພາບສາທາຣະນະຣັດສັງຄົມນິຍົມໂຊວຽດ, ຣາຊອານາຈັກໄທ, ສະຫະຣາຊອານາຈັກບຣິເຕນໃຫຍ່ແລະອຽກລັງພາກເໜືອ, ສາທາຣະນະຣັດປະຊາຊົນໂປໂລຍ, ສາທາຣະນະຣັດຝຣັ່ງເສດ, ສະຫະພາບພະມ້າ, ຣາຊອານາຈັກລາວ, ສາທາຣະນະຣັດປະຊາທິປະໄຕວຽດນາມ, ສາທາຣະນະຣັດວຽດນາມ, ສະຫະຣັດອະເມຣິກາ, ສາທາຣະນະຣັດອິນເດັຽ.

ຖືເອົາຕາມຖແລງການກ່ຽວກັບຄວາມເປັນກາງຂອງລາວລົງວັນທີ ໙/໗/໖໒ ໄດ້ພ້ອມກັນເຫັນດີດັ່ງຕໍ່ລົງໄປນີ້:

<u>ມາດຕາ ໑</u>. ສຳລັບອານຸສັນຍາສະບັບນີ້

ກ. ຄວາມເວົ້າວ່າ "ພະນັກງານທະຫານຕ່າງປະເທດ" ນັ້ນກວມໄປເຖິງບັນດາສະມາຊິກຂອງຄະນະທະຫານຕ່າງປະເທດ, ທີ່ປຶກສາທະຫານຕ່າງປະເທດ, ຜູ້ຊ່ຽວຊານ, ຜູ້ຝຶກຫັດທະຫານ, ຜູ້ຊ່ວຍໃຫ້ຄຳແນະນຳ, ນັກວິຊາສະເພາະ, ນັກສັງເກດການແລະທະຫານຕ່າງປະເທດອື່ນໆ ໂຮມທັງພວກທີ່ຮັບໃຊ້ຢູ່ໃນກອງທະຫານລາວທຸກປະເພດ ແລະພວກພົລເຮືອນຕ່າງປະເທດທີ່ມີໜ້າທີ່ກ່ຽວກັບການເບີກຈ່າຍ, ການບົວຣະບັດ, ການມ້ຽນມັດສິ່ງຂອງ ຫຼືການໃຊ້ສອຍເຄື່ອງຍຸດໂທປະກອນ.

ຂ. ຄຳວ່າ "ຄະນະກັມະການ" ໝາຍເຖິງຄະນະກັມະການສາກົນຄວບຄຸມແລະກວດກາຢູ່ໃນປະເທດລາວ ທີ່ຖືກແຕ່ງຕັ້ງຂຶ້ນຕາມສັນຍາເຊີແນວ ໑໙໕໔ ແລະປະກອບດ້ວຍຜູ້ຕາງໜ້າປະເທດການາດາ ອິນເດັຽ ແລະໂປໂລຍ ໂດຍແມ່ນຜູ້ຕາງໜ້າປະເທດອິນເດັຽເປັນປະທານ.

ຄ. ຄຳວ່າ "ປະທານຮ່ວມ" ໝາຍເຖິງສອງປະທານຂອງກອງປະຊຸມລະຫວ່າງຊາດ ປີ ໑໙໖໑–໑໙໖໒ ເພື່ອແກ້ໄຂບັນຫາລາວ ແລະບັນດາຜູ້ສືບຕໍ່ໃນໜ້າທີ່ຣັຖມົນຕີກະຊວງການຕ່າງປະເທດຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດອັງກິດ ແລະສະຫະພາບສາທາຣະນະຣັດສັງຄົມນິຍົມໂຊວຽດ.

ງ. ຄວາມເວົ້າວ່າ "ພາຄີຂອງກອງປະຊຸມ" ໝາຍເຖິງບັນດາປະເທດທີ່ມາຮ່ວມກອງປະຊຸມລະຫວ່າງຊາດ ປີ ໑໙໖໑–໑໙໖໒ ເພື່ອແກ້ໄຂບັນຫາລາວ.

<u>ມາດຕາ ໔.</u> ທຸກກອງທະຫານຕ່າງປະເທດ, ທີ່ຖືກຕ້ອງຕາມລະບຽບແລະບໍ່ຖືກຕ້ອງຕາມລະບຽບ, ທຸກໜ່ວຍຈັດຕັ້ງເຄິ່ງທະຫານຕ່າງປະເທດ ແລະພະນັກງານທະຫານຕ່າງປະເທດ ຈະຕ້ອງຖອນອອກຈາກພຣະຣາຊອານາຈັກລາວ ພາຍໃນກຳນົດອັນໄວທີ່ສຸດ, ແລະໃນສະຖານໃດກໍຕາມ, ການຖອນທະຫານນັ້ນຕ້ອງໃຫ້ແລ້ວຢ່າງຊ້າ ໓໐ ມື້ ຫຼັງຈາກຄະນະກັມະການໄດ້ບອກໃຫ້ຣັຖບານຣາຊອານາຈັກລາວຮູ້ວ່າໜ່ວຍກວດກາໄດ້ໄປເຖິງຈຸດຖອນທະຫານຕາມທີ່ບົ່ງໄວ້ໃນມາດຕາ ໓ ແລະ ໑໐ ຂອງອະນຸສັນຍານີ້ແລ້ວ. ຈຸດຖອນທະຫານນີ້ແມ່ນຣັຖບານຣາຊອານາຈັກລາວເປັນຜູ້ກະວາງຕາມດັ່ງບົ່ງໄວ້ໃນມາດຕາ ໓ ໂດຍໃຫ້ແລ້ວພາຍໃນກຳນົດສາມສິບມື້ ນັບແຕ່ມື້ປະກາດໃຊ້ອະນຸສັນຍາສະບັບນີ້ເປັນຕົ້ນໄປ. ໃຫ້ໜ່ວຍກວດກາໄປປະຈຳທຸກຈຸດ ແລະໃຫ້ຄະນະກັມະການບອກໃຫ້ຣັຖບານຣາຊອານາຈັກລາວຮູ້ໃນກຳນົດ ໑໕ ວັນ ຫຼັງຈາກມື້ທີ່ກະວາງຈຸດຖອນທະຫານດັ່ງກ່າວນັ້ນແລ້ວ.

ມາດຕາ ໓. ການຖອນທະຫານຕ່າງປະເທດທີ່ຖືກຕ້ອງຕາມລະບຽບແລະບໍ່ຖືກຕ້ອງຕາມລະບຽບ ຫຼືໜ່ວຍຈັດຕັ້ງເຄິ່ງທະຫານຕ່າງປະເທດແລະພະນັກງານທະຫານຕ່າງປະເທດ ຈະໄດ້ດຳເນີນໄປສະເພາະແຕ່ໃນເສັ້ນທາງແລະຕາມຈຸດທີ່ຣັຖບານຣາຊອານາຈັກລາວໄດ້ກະວາງໄວ້ ໂດຍມີການປຶກສາຫາລືກັບຄະນະກັມະການ, ຄະນະກັມະການຈະໄດ້ຮັບການບອກເລົ່າໃຫ້ຮູ້ຈຸດແລະວັນເວລາຖອນທະຫານຕ່າງປະເທດນັ້ນລ່ວງໜ້າໄວ້ກ່ອນ.

ມາດຕາ ໔. ຫ້າມບໍ່ໃຫ້ນຳກອງທະຫານຕ່າງປະເທດທີ່ຖືກຕ້ອງຕາມລະບຽບແລະບໍ່ຖືກຕ້ອງຕາມລະບຽບ ຫຼືໜ່ວຍຈັດຕັ້ງເຄິ່ງທະຫານຕ່າງປະເທດແລະພະນັກງານທະຫານຕ່າງປະເທດ ເຂົ້າມາດິນລາວ.

ມາດຕາ ໕. ໄດ້ຮັບຮູ້ນຳກັນວ່າ ຣັຖບານຝຣັ່ງເສດແລະຣັຖບານລາວຈະໄດ້ຕົກລົງກັນໄວເທົ່າທີ່ຈະໄວໄດ້ ເພື່ອໂອນສະຖານທີ່ຕັ້ງກອງທະຫານຝຣັ່ງຢູ່ໃນດິນລາວຄືນໃຫ້ແກ່ຣັຖບານລາວ.

ຖ້າຣັຖບານລາວຫາກເຫັນວ່າມີຄວາມຈຳເປັນນັ້ນ, ໃນສະຖານພິເສດ, ຣັຖບານຝຣັ່ງເສດອາດຈະປະຜູ້ຝຶກຫັດທະຫານຝຣັ່ງເສດຈຳນວນທີ່ຈຳກັດຄັກແນ່ໄວ້ໃນປະເທດລາວໃນຊຸວລະຍະເວລາອັນຈຳກັດ ເພື່ອຝຶກຊ້ອມກອງທະຫານລາວ. ຣັຖບານຝຣັ່ງເສດແລະຣັຖບານລາວຈະໄດ້ແຈ້ງໃຫ້ບັນດາປະເທດພາຄີຂອງກອງປະຊຸມນີ້ຊາບ, ໂດຍຜ່ານປະທານຮ່ວມທັງສອງ ໃນເຣື່ອງການຕົກລົງລະຫວ່າງສອງຣັຖບານກ່ຽວກັບການໂອນສະຖານທີ່ຕັ້ງກອງທະຫານຝຣັ່ງເສດຢູ່ໃນລາວ, ແລະການທີ່ຣັຖບານລາວຈະໃຊ້ຜູ້ຝຶກຫັດທະຫານຝຣັ່ງເສດ.

มาตรา ๖. ห้ามบ่ให้นำเอาอาวุด, กะสุนปืนและเครื่องอุปะกอนสงคามทั่วไปเข้ามาในดินลาว เว้นเสียแต่อาวุดทัมมะดา ตามจำนวนที่รัฐบานลาวเห็นว่าจำเป็นสำลับการป้องกันปะเทด.

มาตรา ๗. ทะหาน และพลเรือนต่างปะเทดทุกคน ที่ถืกจับหรือถืกขัง ในเวลาลบเลวกันยู่ในปะเทดลาวนั้น จะถืกปล่อยย่างซ้าใน ๓๐ วัน, นับแต่มื้ปะกาดอะนุยาดสันยานี้เป็นต้นไป และรัฐบานราชอานาจักลาวจะมอบคนเหล่านี้ให้แก่ผู้ตางหน้ารัฐบานปะเทดที่เขาเป็นพลเมืองนั้น เพื่อให้เขาได้เดินไปหาบ่อนที่เขาจะเลือกเอา.

มาตรา ๘. ปะทานร่วมทั้งสองจะได้รับลายงานของคะนะกัมะการเป็นละยะสม่ำเสมิ, นอกจากนั้น คะนะกัมะการจะได้ลายงานในทันใดให้ปะทานร่วมซาบทุกๆการละเมิดหรือการมาขู่ว่าจะละเมิดอะนุสันยานี้, ทุกวิทีการสำคัญที่คะนะกัมะการจะกะอางตามบันยัดของอะนุสันยานี้, พ้อมทั้งข่าวคาวสำคัญทุกย่างที่อาดสามาดจะช่วยให้ปะทานร่วมปะติบัดหน้าที่ของตน. ในการปะติบัดหน้าที่ของตนนั้น คะนะกัมะการอาดจะขอความช่วยเหลือของปะทานร่วมได้ทุกเวลา และปะทานร่วมก็อาดจะให้ความแนะนำแก่คะนะกัมะการได้ทุกเวลา เพื่อนำพาคะนะกัมะการในวงการทั่วไป, ปะทานร่วมจะได้ส่งลายงานและข่าวคาวสำคัญต่างๆที่มาจากคะนะกัมะการนั้น ให้บันดาปะเทดพาคี

ຂອງກອງປະຊຸມຊາບນຳ.

ປະທານຮ່ວມຈະເປັນຜູ້ຄວບຄຸມການປະຕິບັດອະນຸສັນຍານີ້ ກັບທັງການປະຕິບັດຖແລງການກ່ຽວກັບຄວາມເປັນກາງຂອງລາວ ປະທານຮ່ວມຈະແຈ້ງໃຫ້ບັນດາປະເທດພາຄີຂອງກອງປະຊຸມຮູ້ຂ່າວຄາວນຳສເນີ ແລະຈະປຶກສາຫາລືກັບເຂົາເຈົ້າໃນເມື່ອເຫັນສົມຄວນ.

<u>ມາດຕາ ៩</u>. ຄະນະກັມະການຈະກ່ຳກັບການຄວບຄຸມແລະກວດກາຢຸດຍິງຢູ່ໃນລາວໂດຍໄດ້ຮັບຄວາມເຫັນພ້ອມຂອງຣັຖບານຣາຊະນາຈັກລາວ. ຄະນະກັມະການຈະປະຕິບັດໜ້າທີ່ດັ່ງກ່າວນີ້ດ້ວຍຄວາມຮ່ວມມືຢ່າງເຕັມສ່ວນກັບຣັຖບານຣາຊອານາຈັກລາວ ແລະໃນຂອບເຂດຂອງສັນຍາຢຸດຍິງ ຫຼືຂອງການປະນີປະນອມກ່ຽວກັບການຢຸດຍິງ ທີ່ສາມກຳລັງຢູ່ໃນລາວ ຫຼືຣັຖບານຣາຊອານາຈັກລາວ ໄດ້ຕົກລົງວາງອອກຕາມທີ່ໄດ້ຕົກລົງກັນ,ຜູ້ຮັບຜິດຊອບໃນການປະຕິບັດການຢຸດຍິງແມ່ນສາມຝ່າຍທີ່ກ່ຽວຂ້ອງ ຫຼືແມ່ນຣັຖບານຣາຊອານາຈັກລາວຫຼັງຈາກໄດ້ຖືກແຕ່ງຕັ້ງຂຶ້ນແລ້ວ.

<u>ມາດຕາ ໑໐</u>. ຄະນະກັມະການຈະຄວບຄຸມ ແລະກວດກາການຖອນທະຫານຕ່າງປະເທດທີ່ຖືກຕ້ອງຕາມລະບຽບແລະບໍ່ຖືກຕ້ອງຕາມລະບຽບ ພ້ອຍຈັດຕັ້ງເຄື່ອງທະຫານຕ່າງປະເທດແລະພະນັກງານທະຫານຕ່າງປະເທດ. ຕລອດຊົ່ວເວລາຖອນທະຫານຕ່າງປະເທດນັ້ນ,ພ້ອຍກວດກາທີ່ກັມະການສົ່ງໄປເຮັດໜ້າທີ່ດັ່ງກ່າວຈະປະຈຳຢູ່ໃນທຸກໆຈຸດຖອນທະຫານຕ່າງປະເທດໃນລາວ ທີ່ຣັຖບານຣາຊອານາຈັກລາວໄດ້ກະວາງໄວ້ ໂດຍມີການປຶກສາຫາລືກັບຄະນະກັມະການຕາມທີ່ໄດ້ບົ່ງໄວ້ໃນມາດຕາສາມຂອງອະນຸສັນຍານີ້.

<u>ມາດຕາ ໑໓</u>. ຄະນະກັມະການຈະໄດ້ດຳເນີນການສືບສວນໃນກໍຣະນີພິຈາຣະນາເຫັນຢ່າງສົມເຫດສົມຜົນວ່າມີການລະເມີດບັນຍັດມາດຕາ ໔ ຂອງອະນຸສັນຍາສະບັບນີ້, ຕາມທີ່ໄດ້ຕົກລົງກັນ, ໃນການປະຕິບັດໜ້າທີ່ດັ່ງກ່າວ ຄະນະກັມະການຈະໄດ້ຮັບຄວາມເຫັນພ້ອມຂອງຣັຖບານຣາຊອານາຈັກສເນີ. ຄະນະກັມະການຈະດຳເນີນການສືບສວນນີ້ດ້ວຍຄວາມຮ່ວມມືກັບຄະນະຣັຖບານຣາຊອານາຈັກລາວຢ່າງເຕັມສ່ວນ ແລະຈະແຈ້ງໃນທັນໃດໄປໃຫ້ປະທານຮ່ວມຮູ້ທຸກໆການລະເມີດ ຫຼືການມາຂູ່ຈະລະເມີດມາດຕາ ໔, ແລະທຸກວິທີການສຳຄັນທີ່ຄະນະກັມະການໄດ້ໃຊ້ຕາມບັນຍັດຂອງມາດຕານີ້ໂດຍໃຫ້ຖືກຕ້ອງຕາມມາດຕາ ໒.

<u>ມາດຕາ ໑໔</u>. ຄະນະກັມະການຈະໃຫ້ຄວາມຊ່ວຍເຫຼືອແກ່ຣັຖບານຣາຊອານາຈັກລາວໃນກໍຣະນີທີ່ຣັຖບານນີ້ເຫັນວ່າຈະມີການລະເມີດມາດຕາ ໖ ຂອງອະນຸສັນຍາສະບັບນີ້. ການຊ່ວຍເຫຼືອນີ້ຈະໄດ້ໃຫ້ໃນເມື່ອຣັຖບານຣາຊອານາຈັກລາວຮ້ອງຂໍ ແລະຮ່ວມມືນຳຢ່າງເຕັມສ່ວນ.

<u>ມາດຕາ ໑໕.</u> ຄະນະກັມະການຈະປະຕິບັດໜ້າທີ່ທີ່ບົ່ງໄວ້ໃນອະນຸສັນຍາສະບັບນີ້ໂດຍມີການຮ່ວມມື ກັບຣັຖບານຣາຊອານາຈັກລາວຢ່າງໃກ້ຊິດ ຕາມທີ່ຕົກລົງກັນ, ຣັຖບານຣາຊອານາຈັກລາວຈະໃຫ້ຄວາມຊ່ວຍເຫຼືອທຸກຂັ້ນ ແລະຕາມຄວາມສາມາດ ແກ່ຄະນະກັມະການໃນການປະຕິບັດໜ້າທີ່ດັ່ງກ່າວ, ແລະອີກປະການນຶ່ງ ຣັຖບານຣາຊອານາຈັກລາວຈະໄດ້ໃຊ້ທຸກວິທີອັນສົມຄວນເພື່ອຮັກສາຄວາມປອດໄພໃຫ້ແກ່ຄະນະກັມະການແລະໜ່ວຍກວດກາຕລອດລະຍະປະຕິບັດງານຂອງເຂົາເຈົ້າຢູ່ໃນປະເທດລາວ.

ມາດຕາ ໑໔. ຄະນະກັມະການປະຕິບັດໜ້າທີ່ໃນຖານະເປັນອົງການອັນດຽວຂອງກອງປະຊຸມລະຫວ່າງຊາດ ປີ ໑໙໖໑-໑໙໖໒. ເພື່ອແກ້ໄຂບັນຫາລາວ. ສະມາຊິກຂອງຄະນະກັມະການຈະປະຕິບັດວຽກງານຢ່າງຖືກຕ້ອງຄ່ອງກັນ ແລະຈະຮ່ວມມືກັນເພື່ອແກ້ໄຂທຸກບັນຫາທີ່ຂຶ້ນກັບສິດອຳນາດຂອງຄະນະກັມະການ. ການຕົກລົງຂອງຄະນະກັມະການໃນບັນຫາກ່ຽວກັບການລະເມີດມາດຕາ ໒,໓,໔ ແລະ ໖ ຂອງອະນຸສັນຍານີ້ ຫຼືລະເມີດການຢຸດຍິງທີ່ລະບຸໄວ້ໃນມາດຕາ ໙, ການສະຫຼຸບບັນຫາອັນສຳຄັນທີ່ສົ່ງໄປຍັງປະທານຮ່ວມແລະການອອກຄຳສເນີທຸກຢ່າງຂອງຄະນະກັມະການຈະຕ້ອງຕົກລົງກັນເປັນເອກສັນ.

ໃນບັນຫາອື່ນໆ, ໂຮມທັງບັນຫາພິທີການ ແລະບັນຫາການເປີດແລະດຳເນີນການກວດກາຕາມທີ່ບົ່ງໄວ້ໃນມາດຕາ ໑໕ ນັ້ນ, ການຕົກລົງຂອງຄະນະກັມະການຈະຕ້ອງເອົາສຽງສ່ວນຫຼາຍ.

ມາດຕາ ໑໕. ໃນການປະຕິບັດໜ້າທີ່ອັນແທ້ຈິງຂອງຕົນ ແລະທີ່ໄດ້ລະບຸໄວ້ໃນບັນດາມາດຕາທີ່ກ່ຽວຂ້ອງໃນອະນຸສັນຍາສະບັບນີ້ ຄະນະກັມະການຈະດຳເນີນການສືບສວນ (ໂດຍກົງຫຼືວ່າດ້ວຍວິທີສົ່ງໜ່ວຍກວດກາລົງໄປ) ໃນເມື່ອພິຈາຣະນາເຫັນຢ່າງສົມເຫດສົມຜົນວ່າມີການລະເມີດແທ້. ການກວດການັ້ນຈະດຳເນີນໄປຕາມຄຳຮ້ອງຂໍຂອງຣັຖບານຣາຊອານາຈັກລາວ ຫຼືຕາມຄວາມຄິດຄວາມເຫັນຂອງຄະນະກັມະການ , ໂດຍໄດ້ຮັບຄວາມເຫັນພ້ອມຂອງຣັຖບານຣາຊອານາຈັກລາວ.

ໃນກໍຣະນີດັ່ງກ່າວນັ້ນ, ການຕົກລົງກ່ຽວກັບການເປີດແລະດຳເນີນການກວດການັ້ນຈະຕ້ອງຕົກລົງຕາມສຽງສ່ວນຫຼາຍ.

ຄະນະກັມະການຈະໄດ້ເຮັດລາຍງານກ່ຽວກັບການກວດການັ້ນ ລາຍງານນັ້ນຕ້ອງໃຫ້ກັມະການທັງຫຼາຍເຫັນດີນຳກັນ ຫຼືບໍ່ດັ່ງນັ້ນກໍໃຫ້ຊີ້ແຈງຄວາມຂັດແຍ່ງທີ່ອາດຈະມີຂຶ້ນໃນລະຫວ່າງກັມະການທັງຫຼາຍ ກ່ຽວກັບບາງຈຸດພິເສດນັ້ນໃສ່ໄປດ້ວຍ.

ບັນດາການສະລຸບ ແລະຂໍ້ສເນີຂອງກັມະການກ່ຽວກັບການກວດການັ້ນຈະຕ້ອງຕົກລົງກັນເປັນເອກສັນ.

<u>ມາດຕາ ໑໖</u>. ເພື່ອປະຕິບັດໜ້າທີ່ຂອງຕົນ, ຄະນະກັມະການຈະແຕ່ງຕັ້ງບັນດາໜ່ວຍກວດກາຂຶ້ນຕາມແຕ່ຈະຕ້ອງການ, ຊຶ່ງໃນນັ້ນສາມປະເທດທີ່ເປັນກັມະການຂອງຄະນະກັມະການຈະປະກອບຜູ້ແທນຂອງຕົນເຂົ້າເປັນຈຳນວນເທົ່າກັນ. ໃຫ້ແຕ່ລະປະເທດທີ່ເປັນກັມະການຂອງຄະນະກັມະການຈັດໃຫ້ມີຜູ້ຕາງໜ້າຂອງຕົນທັງຢູ່ໃນຄະນະກັມະການແລະໜ່ວຍກວດກາສເມີ ແລະໃນກໍຣະນີທີ່ຜູ້ຕາງໜ້າໃດຫາກບໍ່ສາມາດປະຕິບັດໜ້າທີ່ຂອງຕົນໄດ້ ກໍໃຫ້ຈັດໃຫ້ຜູ້ໃໝ່ມາແທນໃນກຳນົດເວລາອັນສົມຄວນ.

ຕາມທີ່ໄດ້ຕົກລົງກັນ, ການສົ່ງໜ່ວຍກວດກາໄປປະຕິບັດໜ້າທີ່ຕ່າງໆຂອງເຂົາເຈົ້ານັ້ນໃຫ້ເຮັດໄປດ້ວຍຄວາມເຫັນພ້ອມຂອງຣັຖບານຣາຊອານາຈັກລາວ. ຈຸດບ່ອນຄະນະກັມະການແລະໜ່ວຍກວດກາຂອງເຂົາເຈົ້າຈະໄປເພື່ອກວດກາ ແລະກຳນົດເວລາທີ່ເຂົາເຈົ້າຈະພັກຢູ່ຕາມຈຸດດັ່ງກ່າວນັ້ນ ຈະຕ້ອງກຳນົດໃຫ້ໂດຍອີງໃສ່ຄວາມຕ້ອງການຂອງການກວດການັ້ນ.

**ມາດຕາ ໑໗.** ຄະນະກັມະການຈະມີພາຫນະສື່ສານ ແລະຂົນສົ່ງທີ່ຕ້ອງການ ເພື່ອປະຕິບັດໜ້າທີ່ຂອງຕົນ. ຕາມຫຼັກການແມ່ນຣັຖບານຣາຊອານາຈັກລາວຈະເອົາພາຫນະເຫຼົ່ານັ້ນໃຫ້ແກ່ຄະນະກັມະການ , ການໃຊ້ຄ່າພາຫນະເຫຼົ່ານັ້ນຈະໄດ້ຈັດໄປຕາມເງື່ອນໄຂທີ່ຕົກລົງນຳກັນ ແລະຄະນະກັມະການຈະຕິດຕໍ່ກັບບ່ອນອື່ນ ເພື່ອຊອກເອົາພາຫນະທີ່ຣັຖບານຣາຊອານາຈັກລາວ ບໍ່ສາມາດຈະເອົາມາໃຫ້ໄດ້. ຕາມທີ່ຕົກລົງກັນ, ຄະນະກັມະການຈະເປັນຜູ້ກວດກາທາງຣາຊການພາຫນະສື່ສານ ແລະຂົນສົ່ງດັ່ງກ່າວນັ້ນ.

**ມາດຕາ ໑໘.** ລາຍຈ່າຍສຳລັບກິຈການຂອງຄະນະກັມະການ ຈະແມ່ນບັນດາປະເທດທີ່ເຂົ້າຮ່ວມກອງປະຊຸມເປັນຜູ້ຮັບເສັຽ ດັ່ງບັນຍັດໄວ້ໃນມາດຕານີ້ຄື:

ກ./ ບັນດາຣັຖບານການາດາ, ອິນເດັຽ ແລະໂປໂລຍຈ່າຍເງິນເດືອນແລະເບັ້ຽລ້ຽງໃຫ້ແກ່ພະນັກງານຂອງປະເທດຕົນທີ່ເປັນສະມາຊິກຂອງຄະນະຜູ້ແທນຂອງຕົນໃນຄະນະກັມະການແລະໃນບັນດາອົງການທີ່ຂຶ້ນກັບຄະນະກັມະການນີ້;

ຂ./ ກ່ອນອື່ນແມ່ນຣັຖບານຣາຊອານາຈັກລາວທີ່ຈະມານອບຢ້າວເຮືອນໃຫ້ແກ່ຄະນະກັມະການແລະບັນດາອົງການທີ່ຂຶ້ນກັບຄະນະກັມະການນີ້ ແລະຈະເອົາສິ່ງອື່ນທີ່ມີຢູ່ໃນທ້ອງຖິ່ນແລະທີ່ເຂົາເຈົ້າອາດຈະຕ້ອງການນັ້ນມາໃຫ້ອີກ. ຄະນະກັມະການຈະເບີກເງິນທີ່ກ່າວຢູ່ໃນວັກ (ຄ) ລຸ່ມນີ້ມາຈ່າຍສຳລັບສິ່ງຂອງໃນທ້ອງຖິ່ນຊຶ່ງຣັຖບານຣາຊອານາຈັກລາວບໍ່ເອົາໃຫ້ໄດ້;

ຄ./ ລາຍຈ່າຍອື່ນໆທີ່ຕ້ອງລົງທຶນຫຼາຍໃນຊົ່ວເວລາເຫິງນານ ແລະລາຍຈ່າຍປະຈຳວັນທີ່ຄະນະກັມະການຈະຕ້ອງການຈ່າຍໃນການປະຕິບັດໜ້າທີ່ຂອງຕົນນັ້ນ ຈະຕ້ອງເອົາມາຈາກຈຳນວນເງິນທີ່ທຸກປະເທດພາຄີຂອງກອງປະຊຸມຈະຕ້ອງເສັຽຕາມສ່ວນສະເລັ່ຽດັ່ງຕໍ່ໄປນີ້:

ບັນດາຣັຖບານສະຫະຣັດອະເມຣິກາ,ຝຣັ່ງເສດ,ສາທາຣະນະຣັດປະຊາຊົນຈີນ,ສະຫະຣາຊອານາຈັກອັງກິດ ແລະສະຫະພາບສາທາຣະນະຣັດສັງຄົມນິຍົມໂຊວຽດ : ໑໗,໖ %

ບັນດາຣັຖບານສະຫະພາບພະມ້າ,ກັມພູຊາ,ລາວ,ສາທາຣະນະຣັດປະຊາທິປະໄຕວຽດນາມ,ສາທາຣະນະຣັດວຽດນາມ ແລະໄທ ປະເທດລະ ໑,໕%

ບັນດາຣັຖບານຂອງປະເທດການາດາ,ອິນເດັຽ ແລະໂປໂລຍທີ່ເປັນກັມະການຂອງຄະນະກັມະການ, ປະເທດລະ ໑,໐໐ %

ມາດຕາ ໑໙. ໃນທຸກເວລາ, ຖ້າຣັຖບານຣາຊອານາຈັກລາວຫາກຮ້ອງຂໍ,ແລະໃນສະຖານໃດກໍຕາມ, ຢ່າງຊ້າສາມປີຫຼັງຈາກມື້ປະກາດໃຊ້ອະນຸສັນຍາສະບັບນີ້,ປະທານຮ່ວມຈະສົ່ງລາຍງານຊຶ່ງມີຂໍ້ສເນີສະເພາະໃຫ້ເລີກການດຳເນີນງານຂອງຄະນະກັມະການໄປໃຫ້ບັນດາປະເທດພາຄີຂອງກອງປະຊຸມພິຈາຣະນາ ກ່ອນຈະແຕ່ງລາຍງານນັ້ນ, ປະທານຮ່ວມຈະປຶກສາຫາລືກັບຣັຖບານຣາຊອານາຈັກລາວ ແລະຄະນະກັມະການເສັຽກ່ອນ.

<u>ມາດຕາ ໔໐</u>. ອະນຸສັນຍາສະບັບນີ້ ຈະປະກາດໃຊ້ຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ອະນຸສັນຍາສະບັບນີ້ ຈະເອົາບັນຈຸໄວ້ໃນຫໍສມຸດຂອງບັນດາຣັຖບານສະຫະຣາຊອານາຈັກອັງກິດ ແລະສະຫະພາບສາທາຣະນະຣັດສັງຄົມນິຍົມໂຊວຽດ. ຣັຖບານເຫຼົ່ານີ້ຈະຄັດສຳເນົາຢັ້ງຢືນຖືກຕ້ອງສົ່ງໃຫ້ບັນດາປະເທດອື່ນທີ່ລົງລາຍເຊັນດ້ວຍກັນ ແລະໃຫ້ທຸກປະເທດອື່ນໆໃນໂລກອີກດ້ວຍ.

ເພື່ອເປັນຫຼັກຖານ, ບັນດາຜູ້ມີອຳນາດເຕັມທີ່ມີຊື່ຢູ່ໃນນີ້ ໄດ້ລົງລາຍເຊັນໃນອະນຸສັນຍາສະບັບນີ້.

ເຮັດເປັນສອງສະບັບທີ່ນະຄອນເວີແນວ ວັນທີ ໒໑ ກໍຣະກະດາ ໑໙໖໔, ເປັນພາສາຝຣັ່ງເສດ, ອັງກິດ, ຈີນ, ລາວ ແລະໂຊວຽດ ທຸກສະບັບຖືເປັນຫຼັກຖານໃຫ້ຄືກັນ./.